ມູນນິທິ ອະນຸລັກ ສັດປ່າ ລາວ
ບ້ານ ຊຽງແລທ່າ, ເມືອງ ປາກງື່ມ
ແຂວງ ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856 20 52 902 093
ອີເມວ: info@lctwildlife.org
ເວັບໄຊທ໌: www.lctwildlife.org
ເຟສບຸກຄ໌: www.facebook.com/lctwildlife

Lao Conservation Trust for Wildlife
Ban Xiengletha, Muang Pak Ngeum
Vientiane Province, Lao PDR
Phone: +856 20 52 902 093
Email: info@lctwildlife.org
Website: www.lctwildlife.org
Facebook: facebook.com/lctwildlife

# ຕຳແໜ່ງສັດຕະວະແພດສັດປ່າ

# (ສະເພາະຄົນລາວ)

*English Version Below*

ມູນນິທິ ອະນຸລັກ ສັດປ່າ ລາວ (LCTW) ກຳລັງຊອກຫາບຸກຄະລາກອນທີ່ມີຄວາມສົນໃຈ ເພື່ອເຂົ້າຮ່ວມເຮັດວຽກເປັນສັດຕະວະແພດສັດປ່າກັບທີມງານສັດຕະວະແພດຂອງພວກເຮົາ.

ມູນນິທິ ອະນຸລັກ ສັດປ່າ ລາວ (LCTW) ເປັນສູນອະນຸລັກ ແລະ ຊ່ວຍເຫຼືອສັດປ່າທີ່ບໍ່ສະແຫວງຫາຜົນກຳໄລ ແລະ ໄດ້ຈົດທະບຽນຢູ່ໃນປະເທດລາວ. ພາລະກິດຂອງສູນພວກເຮົາແມ່ນເຮັດວຽກຮ່ວມກັບບັນດາພາກສ່ວນອະນຸລັກສັດປ່າທັງພາຍໃນ ແລະ ສາກົນ ເພື່ອສະກັດກັ້ນການຄ້າສັດປ່າທີ່ຜິດກົດໝາຍ. ສູນພວກເຮົາກອບກູ້, ບຳບັດຟື້ນຟູ ແລະ ປ່ອຍສັດປ່າພື້ນເມືອງທີ່ໄດ້ຮັບຜົນກະທົບຈາກການຄ້ານີ້. ນອກຈາກນີ້, ສູນພວກເຮົາຍັງສ້າງສະຫວັດດີການ ແລະ ຄວາມອາດສາມາດໃນການອະນຸລັກສັດ ໂດຍຜ່ານການມີສ່ວນຮ່ວມ ແລະ ເຜີຍແຜ່ໃນທົ່ວ ສປປ ລາວ.

ຜູ້ສະໝັກທີ່ຖືກຄັດເລືອກຈະໄດ້ຮ່ວມເຮັດວຽກໃນການກອບກູ້, ບຳບັດຟື້ນຟູ ແລະ ປ່ອຍສັດປ່າທີ່ປະຊາຊົນບໍລິຈາກໃຫ້ສູນ ຫລື ສັດປ່າທີ່ຖືກຍຶດຈາກການຄ້າສັດປ່າທີ່ຜິດກົດໝາຍ. ພວກເຮົາມີຈຸດປະສົງຈະສະໜອງສະຖານທີ່ທີ່ໄດ້ມາດຕະຖານສູງໃຫ້ສຳລັບສັດຈຳພວກທີ່ບໍ່ເໝາະສົມນຳໄປປ່ອຍ ໄດ້ອາໄສຢູ່ຕະຫຼອດຊີວິດ. ປັດຈຸບັນນີ້ສູນຂອງພວກເຮົາເປັນສັນຍາລັກ ແລະ ຈຸດປະສານງານຂອງຄວາມພະຍາຍາມໃນການອະນຸລັກ ໃນ ສປປ ລາວ.

ສູນພວກເຮົາມີສັດປະມານ 200 ໂຕ ປະກອບດ້ວຍຫຼາກຫຼາຍຊະນິດທີ່ມີຖິ່ນກຳເນີດຢູ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ (ສ່ວນຫຼາຍແມ່ນຢູ່ໃນປະເທດລາວ). ສັດດັ່ງກ່າວນີ້ລວມມີ: ໝີ, ສັດຕະກຸນລີງ, ສັດຕີນກີບ, ສັດເລືອຄານ, ສັດປີກ ແລະ ສັດລ້ຽງລູກດ້ວຍນ້ຳນົມຂະໜາດນ້ອຍອື່ນໆ. LCTW ມີຄວາມມຸ່ງໝັ້ນໃນການອະນຸລັກລະດັບພາກພື້ນ ແລະ ທົ່ວໂລກ; ສູນພວກເຮົາເຮັດວຽກຄຽງຂ້າງກັບບັນດາອົງການອະນຸລັກສັດປ່າ ແລະ ໜ່ວຍງານລັດຖະບານ ເພື່ອຊ່ວຍເຫຼືອໃນການອະນຸລັກຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ.

**ພາລະໜ້າທີ່**

ການເປັນສັດຕະວະແພດສັດປ່າ ທ່ານຈະໄດ້ດູແລດ້ານສັດຕະວະແພດໃຫ້ສັດປ່າຊະນິດຕ່າງໆ ເຊັ່ນ: ສັດລ້ຽງລູກດ້ວຍນ້ຳນົມ, ສັດເລືອຄານ ແລະ ສັດປີກ. ນອກຈາກນີ້, ທ່ານຍັງຈະໄດ້ຊ່ວຍໃຫ້ການຊີ້ນຳນັກສຶກສາ, ນັກຝຶກງານ ແລະ ອາສາສະໝັກ. ເຮັດວຽກໃກ້ຊິດກັບຫົວໜ້າສັດຕະວະແພດ, ຜູ້ຈັດການຝ່າຍລ້ຽງສັດ ແລະ ອຳນວຍການ, ທ່ານຈະໄດ້ດູແລກວດກາສຸຂະພາບ ແລະ ສະຫວັດດີການສັດທຸກໂຕທີ່ຢູ່ພາຍໃຕ້ການລ້ຽງດູຂອງ LCTW ແລະ ປະກອບສ່ວນເຂົ້າໃນການຂະຫຍາຍໂຄງການອະນຸລັກຂອງພວກເຮົາໃນປະເທດລາວ.

**ໜ້າທີ່ຮັບຜິດຊອບຫຼັກ:**

- **ການດູແລທາງການແພດ:** ໃຫ້ການປິ່ນປົວທາງການແພດແກ່ສັດຈຳນວນ 200 ໂຕ ທີ່ຢູ່ໃນສູນຂອງພວກເຮົາ ເພື່ອຮັບປະກັນໃຫ້ສັດທຸກໂຕໄດ້ຮັບມາດຕະຖານການດູແລສູງສຸດເທົ່າທີ່ເປັນໄປໄດ້ພາຍໃຕ້ຂໍ້ຈຳກັດໃນປະເທດລາວ. ເຂົ້າຮ່ວມໃນພາລະກິດກອບກູ້ສັດປ່າ 24/7, ໃຫ້ການປິ່ນປົວສຸກເສີນແກ່ສັດປ່າທີ່ໄດ້ຮັບການກອບກູ້ມາ ແລະ ຊ່ວຍລ້ຽງລູກສັດນ້ອຍທີ່ໄດ້ມາຈາກການຄ້າສັດປ່າທີ່ຜິດກົດໝາຍ.
- **ການເກັບກຳບັນທຶກ:** ເກັບກຳຂໍ້ມູນຢາປິ່ນປົວສັດໃຫ້ຄົບຖ້ວນ ແລະ ຕາມສະໄໝ.
- **ການດູແລຮັກສາໂຮງໝໍ:** ປະສານງານ ແລະ ມີສ່ວນຮ່ວມໃນການທຳຄວາມສະອາດປະຈຳວັນ, ບຳລຸງຮັກສາອຸປະກອນ, ບຳລຸງຮັກສາສາງເຄື່ອງ. ຈັດຊື້ອຸປະກອນສຳລັບໂຮງໝໍສັດປ່າ. .
- **ການລ້ຽງດູສັດ:** ຊ່ວຍລ້ຽງລູກສັດປ່ານ້ອຍ, ສັດປ່ວຍທີ່ເຂົ້າຮັບການຮັກສາໃນໂຮງໝໍ ແລະ ວຽກສ່ວນອື່ນໆ ຖ້າຫາກມີຄວາມຈຳເປັນ.
- **ການເປັນຜູ້ນຳ ແລະ ການຈັດການ:** ຊ່ວຍໃນການຊີ້ນຳ ແລະ ໃຫ້ຄຳປຶກສານັກຮຽນ ແລະ ອາສາສະໝັກ. ສົ່ງເສີມສະພາບແວດລ້ອມທີມງານທີ່ມີການຮ່ວມມືກັນ ແລະ ມີປະສິດທິພາບ.
- **ການສື່ສານ:** ສື່ສານຢ່າງເປີດເຜີຍກັບພະນັກງານຝ່າຍບໍລິຫານ (ເຊັ່ນ: ຫົວໜ້າສັດຕະວະແພດ, ຜູ້ຈັດການຝ່າຍລ້ຽງສັດ, ຜູ້ອຳນວຍການ) ເພື່ອສະແດງຄວາມຄິດເຫັນ, ເນັ້ນໃສ່ຂໍ້ກັງວົນ ແລະ ສອບຖາມ. ຮ່ວມມື ແລະ ສື່ສານຢ່າງມີປະສິດທິພາບກັບສະມາຊິກພະນັກງານລ້ຽງສັດທຸກຄົນ. ສື່ສານວຽກງານຂອງທ່ານ ແລະ ພາລະກິດຂອງສູນ LCTW ກັບປວງຊົນ. ຕິດຕໍ່ປະສານງານກັບຜູ້ສະໜອງໃນທ້ອງຖິ່ນ ແລະ ຫ້ອງທົດລອງ.

- **ຂັ້ນຕອນການປະຕິບັດງານທີ່ໄດ້ມາດຕະຖານ (SOPs):** ປະຕິບັດຕາມ “SOPs” ຢ່າງລະອຽດຖີ່ຖ້ວນ ແລະ ຮັບປະກັນວ່າຈະໃຊ້ໄດ້ຜົນດີກັບຄລີນິກ ແລະ ມີອາສາສະໝັກ ແລະ ນັກຝຶກງານປະຕິບັດຕາມ.

**ໜ້າທີ່ຮັບຜິດຊອບເພີ່ມເຕີມ:**

- **ການຂະຫຍາຍສິ່ງອໍານວຍຄວາມສະດວກ:** ເຮັດວຽກຮ່ວມກັບຫົວໜ້າສັດຕະວະແພດໃນການຂະຫຍາຍສິ່ງອໍານວຍຄວາມສະດວກຂອງໂຮງໝໍສັດປ່າ ເພື່ອປັບປຸງຄວາມອາດສາມາດ ແລະ ການເຮັດວຽກຂອງໂຮງໝໍ.
- **ການຮ່ວມມື:** ເຮັດວຽກໃກ້ຊິດກັບຜູ້ຈັດການຝ່າຍລ້ຽງສັດ, ຫົວໜ້າສັດຕະວະແພດ ແລະ ຜູ້ອໍານວຍການ ເພື່ອປັບການປະຕິບັດດ້ານສັດຕະວະແພດໃຫ້ສອດຄ່ອງກັບເປົ້າໝາຍ ແລະ ຍຸດທະສາດການອະນຸລັກຂອງ LCTW.

**ເງື່ອນໄຂ/ຄຸນສົມບັດທີ່ຈໍາເປັນ:**

- ປະລິນຍາດ້ານສັດຕະວະແພດ
- ມີຄວາມສົນໃຈໃນດ້ານການອະນຸລັກສັດປ່າ
- ມີທັກສະການຈັດຕັ້ງທີ່ເຂັ້ມແຂງ
- ມີຄວາມສົນໃຈຢ່າງຍິ່ງໃນການພັດທະນາວິຊາຊີບຢ່າງຕໍ່ເນື່ອງ
- ມີຄວາມຮູ້ໃນການນໍາໃຊ້ຄອມພິວເຕີ
- ສາມາດເຂົ້າຮ່ວມປະຕິບັດງານໃນພາກສະໜາມທີ່ຢູ່ເຂດຫ່າງໄກສອກຫຼີກຫຼາຍວັນໄດ້ (ກໍລະນີມີການໄປກອບກູ້ສັດ ຫລື ປ່ອຍສັດ)
- ມີຄວາມກະຕືລືລົ້ນໃນການຊີ້ນໍາ ແລະ ສອນນັກຮຽນ, ອາສາສະໝັກ ແລະ ພະນັກງານ
- ມີຄວາມສາມາດໃນການສື່ສານທີ່ດີເລີດ
- ມີຄວາມອົດທົນ ແລະ ປັບຕົວໄດ້ງ່າຍໃນບ່ອນເຮັດວຽກ
- ມີຄວາມສົນໃຈເຮັດວຽກເປັນທີມທີ່ມີຫຼາຍລະບຽບວິໄນ ແລະ ຫຼາຍວັດທະນະທໍາ
- ມີຄວາມສາມາດທີ່ຈະເອົາຊະນະອຸປະສັກທາງດ້ານພາສາ
- ມີຄວາມເຕັມໃຈທີ່ຈະຮຽນຮູ້/ພັດທະນາພາສາອັງກິດຈາກເພື່ອນຮ່ວມງານ ແລະ/ຫລື ຄູສອນພິເສດທີ່ສະໜອງໂດຍ LCTW
- ມີຄວາມສະດວກສາມາດເຮັດວຽກຢູ່ໃນເຂດຊົນນະບົດ
- ມີແຮງຈູງໃຈໃນຕົນເອງ ແລະ ສາມາດເຮັດວຽກຢູ່ໃນສະພາບທີ່ທ້າທາຍດ້ວຍຄວາມອ່ອນໄຫວທາງດ້ານວັດທະນະທໍາ
- ສາມາດເຮັດວຽກໄດ້ໃນຕໍາແໜ່ງນີ້ຢ່າງໜ້ອຍ 12 ເດືອນ

**ເງື່ອນໄຂ/ຄຸນສົມບັດທີ່ຕ້ອງການ:**

- ມີຄວາມຄ່ອງແຄ້ວທາງດ້ານພາສາລາວ ແລະ ອັງກິດ, ທັງຂຽນ ແລະ ເວົ້າ
- ມີໃບອະນຸຍາດຂັບຂີ່ AB
- ມີປະສົບການເຄີຍເຮັດວຽກຢູ່ໃນຄລີນິກມາກ່ອນ
- ມີປະສົບການເຄີຍໃຊ້ Google Workspace
- ມີປະສົບການໃນການເກັບບັນທຶກຂໍ້ມູນ ແລະ/ຫລື ການປ້ອນຂໍ້ມູນ
- ມີຄວາມສາມາດໃນການທໍາການສະຫຼົບສັດທົ່ວໄປ ທັງໃນໂຮງໝໍ ແລະ ພາກສະໜາມ
- ສາມາດດໍາເນີນການ ແລະ ວິນິດໄສຜົນຂອງການກວດ (x-ray ແລະ ultrasound)
- ມີຄວາມສາມາດໃນການຮັບມືຜູ້ດຽວກັບກໍລະນີມີການປິ່ນປົວ ຫຼື ມີການຜ່າຕັດ
- ມີປະສົບການເຄີຍເຮັດວຽກຢູ່ໃນໂຮງໝໍປິ່ນປົວສັດປ່າ ແລະ/ຫລື ສູນບໍາບັດສັດປ່າ
- ມີປະສົບການ ແລະ ຄວາມຮູ້ກ່ຽວກັບສັດປ່າໃນອາຊີຕາເວັນອອກສ່ຽງໃຕ້
- ມີປະສົບການໃນການນໍາໃຊ້ອຸປະກອນທໍາການສະຫຼົບ ເຊັ່ນ: ປືນຍິງຢາສະຫຼົບ ແລະ ບັ້ງເປົ່າຢາສະຫຼົບ
- ມີຄວາມເຂົ້າໃຈກ່ຽວກັບການລະດົມທຶນສໍາລັບຂະແໜງການສັດປ່າທີ່ບໍ່ຫວັງຜົນກໍາໄລ
- ມີປະສົບການເຄີຍໃຊ້ ZIMS ຫລື ລະບົບການບັນທຶກຂໍ້ມູນໃນອອນໄລນ໌ທີ່ຄ້າຍກັນ ເຊັ່ນ: (SPARKS, ARK, MedARKS)

**ຄ່າຕອບແທນ ແລະ ຜົນປະໂຫຍດທີ່ໄດ້ຮັບ:**

- ເງິນເດືອນ: $300 ຕໍ່ ເດືອນ
- ບ່ອນຢູ່: ມີເຮືອນພັກໃຫ້ຢູ່ແບບສ່ວນຕົວ

- ສິ່ງອຳນວຍຄວາມສະດວກລວມມີ: (ນ້ຳຮ້ອນ, ໄຟຟ້າ, ອິນເຕີເນັດ)
- ເວລາພັກ:
  - ພັກ 2 ມື້ ຕໍ່ ອາທິດ
  - ຈ່າຍເວລາພັກ: 24 ມື້ ຕໍ່ ປີ
    - ພັກທາງລັດຖະການ: 9 ວັນ ຕໍ່ ປີ
    - ພັກສ່ວນຕົວ: 15 ວັນ ຕໍ່ ປີ
- ການເດີນທາງ:
  - ຄ່າໃຊ້ຈ່າຍໃນການເດີນທາງກ່ຽວກັບວຽກທຸກຢ່າງພາຍໃນປະເທດ ທາງສູນຈະເປັນຜູ້ຮັບຜິດຊອບ
  - ສາມາດນຳໃຊ້ລົດຂອງສູນ ເພື່ອທຸລະສ່ວນຕົວໄດ້ໃນເມື່ອລົດວ່າງ

ສູນຂອງພວກເຮົາຕັ້ງຢູ່ບ້ານ ຊຽງແລທ່າ, ເມືອງປາກງື່ມ ຫ່າງຈາກນະຄອນຫຼວງວຽງຈັນໄປ ປະມານ 1.5 ຊົ່ວໂມງ. ເຖິງແມ່ນວ່າສູນພວກເຮົາຂ້ອນຂ້າງຢູ່ໃນເຂດນອກ ແຕ່ບ້ານແຖວນັ້ນກໍ່ມີເຕັມໄປດ້ວຍສິ່ງອຳນວຍຄວາມສະດວກຫຼາຍຢ່າງ ເຊັ່ນ: ຮ້ານຂາຍຢາ, ຕະຫຼາດ ແລະ ເຂົ້າເຖິງສິ່ງອຳນວຍຄວາມສະດວກບາງຢ່າງທີ່ມີຢູ່ແຫຼ່ງທ່ອງທ່ຽວນ້ຳປຽນຍໍລະປ່າ ເຊັ່ນ: (ຮ້ານກາເຟ, ສະລອຍນ້ຳ, ຮ້ານອາຫານ, ຂີ່ສະລິງ, ຍ່າງປ່າ ແລະ ອື່ນໆ)

ເບິ່ງແລ້ວມັນເປັນວຽກໃນຝັນຂອງທ່ານບໍ? ຖ້າຫາກທ່ານມີຄວາມຫຼົງໄຫຼໃນການຊ່ວຍເຫຼືອພວກເຮົາອະນຸລັກ ແລະ ກອບກູ້ສັດປ່າໃນ ສປປ ລາວ ກະລຸນາສົ່ງ CV ແລະ cover letter ຂອງທ່ານມາທີ່ info@lctwildlife.org.

ສະເພາະຜູ້ສະໝັກທີ່ຖືກຄັດເລືອກເຂົ້າສຳພາດເທົ່ານັ້ນຈຶ່ງຈະໄດ້ຮັບການຕິດຕໍ່

ເຂົ້າຮ່ວມກັບພວກເຮົາທີ່ LCTW ແລະ ສ້າງຜົນປະໂຫຍດອັນສຳຄັນຕໍ່ການອະນຸລັກສັດປ່າໃນລາວ!

The Lao Conservation Trust for Wildlife seeks an interested individual to join our onsite veterinary team as a Wildlife Veterinarian.

LCTW is a non-profit wildlife conservation and rescue center registered in Laos. Our mission is to work jointly with key conservation stakeholders, both within Laos and internationally, to end the illegal wildlife trade. We rescue, rehabilitate, and release native wildlife affected by this trade. In addition, we build animal welfare and conservation capacity through engagement and outreach across Lao PDR.

The successful candidate will be involved in rescuing, rehabilitating, and releasing confiscated and donated animals from the illegal wildlife trade. We aim to provide the highest standard of life-long sanctuary for those unsuitable for release. Our site is now a beacon and focal point of conservation efforts in Lao PDR.

We house around 200 animals of varying taxa native to Southeast Asia (mainly Laos). These include bears, a variety of primates, ungulates, reptiles, birds, and other small mammals. LCTW is committed to regional and global conservation; we work alongside other wildlife organizations and the Lao government to aid in biodiversity conservation efforts.

**The Role**

As a Wildlife Veterinarian, you will provide veterinary care for various species, including mammals, reptiles, and birds. You will also assist in supervising students, interns, and volunteers. Working closely with the Head Veterinarian, Animal Manager, and Director, you will oversee the health and welfare of all animals under LCTW's care and contribute to expanding our conservation programs in Laos.

**Key Responsibilities:**

- **Medical Care:** provide medical treatment to our ~200 resident animals, ensuring the highest standards of care possible within the limitations in Laos. Participate in 24/7 rescue missions, provide emergency care to rescued wildlife, and support the rearing of orphaned animals from the illegal wildlife trade.

- **Record keeping:** keep all medical records complete and up to date.
- **Hospital upkeep:** coordinate and participate in daily cleaning operations, equipment maintenance, and stock maintenance. Procure supplies for the wildlife hospital.
- **Animal husbandry:** assist with animal husbandry for orphaned wildlife, hospitalized patients, and other sections if needed.
- **Leadership and Management:** assist in supervising and mentoring students and volunteers. Foster a collaborative and efficient team environment.
- **Communication:** Communicate openly with Management staff (Head Veterinarian, Animal Manager, and Director), expressing ideas, highlighting concerns, and asking questions. Collaborate and effectively communicate with all members of the animal care staff. Communicate your work and the mission of LCTW with the public. Liaise with local suppliers and laboratories.
- **Standard Operating Procedures (SOPs):** thoroughly follow “SOPs” and ensure they work well for the clinic and are being followed by volunteers and interns.

**Additional Responsibilities:**

- **Facility Expansion:** Work with the Head Veterinarian on expanding the facilities of the Wildlife Hospital to improve its capacity and functionality.
- **Collaboration:** Work closely with the Animal Manager, Head Veterinarian and Director to align veterinary practices with LCTW’s conservation goals and strategies.

**Essential Qualifications:**

- Degree in Veterinary Medicine
- Interest in wildlife conservation
- Strong organizational skills
- Strong interest in continuous professional development
- Comfortable using a computer
- Comfortable joining multi-day field operations in remote locations (rescue and/or release)
- Enthusiasm for supervising and teaching students, volunteers, and staff
- Excellent communication abilities
- Patience and flexibility in the workplace
- Interested in working in a multidisciplinary and multicultural team
- Willingness to overcome language barriers
- Willingness to learn/improve English from co-workers and/or tutor provided by LCTW
- Comfortable working in a rural setting
- Self-driven and able to work in challenging conditions with cultural sensitivity
- Willingness to commit to at least 12 months in this role

**Desirable Qualifications:**

- Fluency in English, both written and spoken
- Valid category A and B driving license
- Previous work experience in a clinical setting
- Previous experience with Google Workspace
- Previous experience with record keeping and/or data entry
- Capability to perform general anesthesia in both hospital and field settings
- Comfortable with conducting and interpreting diagnostic imaging (x-ray and ultrasound)
- Ability to independently handle medical and surgical cases
- Previous experience working in a Wildlife Hospital and/or rehabilitation center
- Experience with and knowledge of Southeast Asian wildlife

- Experience with using immobilizing equipment, such as dart guns and blowpipes
- Understanding of fundraising for the non-profit wildlife sector
- Previous experience using ZIMS or a similar online records system (SPARKS, ARK, MedARKS)

**Compensation and Benefits:**

- Salary: $300 USD per month
- Housing: Personal one-room house with small loft provided
- Utilities included (hot water, electricity, internet)
- Time Off:
    - Two days off per week
    - Paid Time Off: 24 days per year
        - Paid holidays: 9 days per year
        - Personal Time Off: 15 days per year
- Travel:
    - Essential long-distance business-related travel expenses within the country covered
    - Access to an organizational vehicle for personal use when available

Our center is located in Ban Xiengletha, approximately a 1.5-hour drive north of Vientiane, the capital of Lao PDR. Although we are in a rural area, our village offers various amenities such as pharmacies, markets, and access to facilities at Nampien Yorla Pa (coffee shop, pool, restaurant, ziplining, hiking, etc.).

Does this sound like your dream job? If you are passionate about helping us conserve and rescue wildlife in Lao PDR, please send your CV and cover letter to info@lctwildlife.org.

Suitable candidates will be contacted for an in-person interview. Only candidates selected for an interview will be contacted.

Join us at LCTW and significantly impact wildlife conservation in Laos!